Government of Lao PDR

ບົດຂ່າວ

30 ມິນາ 2010

## ກອງປະຊຸມການນຳ ປີ 2010 ທີ່ນະຕອນຫຼວງວຽງຈັນ: ການປັບປຸງຢ່າງຮອບດ້ານດ້ານ, ຄຸນນະພາບ ແລະ ຄວາມຍືນຍົງ

ກອງປະຊຸມການນຳ ປະຈຳປີ2010 ຈັດຂຶ້ນທີ່ນະຄອນຫຼວງວຽງຈັນໃນວັນທີ 30 ແລະ 31 ເດືອນມິນາ ໂດຍມີການເຂົ້າຮ່ວມຂອງບັນດາຜູ້ນຳຈາກຫຼາຍພາກສ່ວນທີ່ມີພື້ນຖານທີ່ແຕກຕ່າງກັນເພື່ອເປັນການແລກປ່ຽນບົດຮຽນທີ່ດີເດັ່ນໃນການປະຕິບັດ, ແບ່ງປັນບັນດາການສຶກສາກໍລະນີທີ່ມີການປຸກລະດົມທາງດ້ານຈິດໃຈ ແລະ ການຂະຫຍາຍເຄືອຄ່າຍ ເພື່ອແນໃສ່ໃນການສ້າງສະພາບແວດລ້ອມທີ່ຊ່ວຍໃຫ້ມີການກະຕຸ້ນບັນດາຂໍ້ລິເລີ່ມ ແລະ ກິດຈະກຳໃນການພັດທະນາດ້ານການນຳພາໃນທ້ອງຖິ່ນ. ຈຳນວນຜູ້ເຂົ້າຮ່ວມຂອງກອງປະຊຸມການນຳ ປີ2010 ຄັ້ງນີ້ລວມມີບັນດາກຸ່ມຄົນທີ່ແຕກຕ່າງກັນ ເຊິ່ງມາຈາກພາກສ່ວນລັດຖະບານ, ພາກສ່ວນເອກະຊົນ, ບັນດາຄູ່ຮ່ວມພັດທະນາ, ບັນດາອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ແລະ ບັນດາອົງການຈັດຕັ້ງທີ່ບໍ່ຫວັງຜົນປະໂຫຍດ.

ກອງປະຊຸມໄດ້ຈັດຂຶ້ນຮ່ວມກັນລະຫວ່າງ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ (NAPPA), ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ (PACSA), SNV – ອົງການພັດທະນາເນເທີແລນ ແລະ ອົງການ ສປຊ ເພື່ອການພັດທະນາ (UNDP).

ກອງປະຊຸມຊຸດທຳອິດທີ່ໄຂຂຶ້ນໃນປີ 2007 ໄດ້ສຸມໃສ່ໃນການຍົກສູງທາງດ້ານຈິດສຳນຶກ. ໃນປີ 2010 ກອງປະຊຸມໄດ້ສຸມໃສ່ການພັດທະນາດ້ານການນຳພາ ແລະ ບັນດາແຜນການສຳລັບອານາຄົດ ເພື່ອປັບປຸງບັນດາແນວຄວາມຄິດສຳລັບການປະສານງານ ແລະ ການເຂົ້າຮ່ວມໃນການພັດທະນາທາງດ້ານການນຳພາ.

ບັນດາແຂກສາກົນທີ່ທີ່ ມາຈາກນະຄອນຫຼວງວຽງຈັນ ແລະ ຟີລິບປິ່ນ ຈະມີການແລະປ່ຽນບົດຮຽນຈາກປະເທດຂອງຕົນເອງເຂົ້າໃນການປັບປຸງຮອບດ້ານ, ການພັດທະນາການນຳພາທີ່ມີຄຸນນະພາບ ແລະ ມີຄວາມຍືນຍົງ ກັບບັນດາຜູ້ເຂົ້າຮ່ວມຈາກ ສປປ ລາວ. ຈຸດເດັ່ນຂອງຄວາມທ້າທາຍ ແລະ ກາລະໂອກາດທີ່ສຳຄັນນັ້ນກໍ່ຄື ບັນດາແຂກທີ່ກ່າວປາໄສພາຍພາຍໃນປະເທດເຊິ່ງເປັນຕົວແທນຈາກພາກສ່ວນຕ່າງໆ ຈະໄດ້ແລກປ່ຽນປະສົບການຂອງໃຜລາວເຂົ້າໃນການພັດທະນາວຽກງານການນຳພາໃນຂອງ ສປປ ລາວ.

ໃນຫົວຂໍ້ຂອງການປັບປຸງຢ່າງຮອບດ້ານ, ກອງປະຊຸມໄດ້ກ່າວເຖິງຄວາມໝາຍຄວາມສຳຄັນຂອງການການເຂົ້າມາມີສ່ວນຮ່ວມຈາກຫຼາຍພາກສ່ວນຂອງລັດຖະບານ, ໂດຍສະເພາະ ແມ່ນການສຸມໃສ່ໃນການແກ້ໄຂບັນຫາຍິງຊາຍ, ບຸກຄົນຜູ້ທີ່ດ້ອຍໂອກາດ ແລະ ບັນຫາສັງຄົມພົນລະເຮືອນໂດຍລວມ. ໃນຫົວຂໍ້ ຄຸນນະພາບ, ກອງ ປະຊຸມໄດ້ໄດ້ເນັ້ນເຖິງບັນດາກົນໄກການຄຸ້ມຄອງຄຸນນະພາບ ຂອງອຳນາດການປົກຄອງຢູ່ໃນຫຼາຍໆຂັ້ນ, ເພື່ອແນໃສ່ໃນການເພີ່ມທະວີຄວາມໂປ່ງໃສ ແລະ ບັນດາໜ້າທີ່ຄວາມຮັບຜິດຊອບ. ໃນຫົວຂໍ້ ຄວາມຍືນຍົງ, ກອງປະຊຸມໄດ້ກ່າວເຖິງບັນຫາຂອງໂລກທີ່ກຳລັງສົ່ງຜົນກະທົບຕໍ່ກັບ ສປປ ລາວ, ເປັນຕົ້ນໄພພິບັດທາງທຳມະຊາດ, ບັນຫາສິ່ງແວດລ້ອມ ແລະ ການຕ້ານກັບຄວາມທຸກຍາກ. ການໃຫ້ທິດທາງທາງດ້ານການເງິນ ແລະ ການສະຖາບັນ ທີ່ມີຄວາມຍືນຍົງ ຈະຊ່ວຍສະໜັບສະໜູນໃຫ້ແກ່ ສປປ ລາວ ໃນການບັນລຸເປົ້າໝາຍ ສະຫະສະວັດ ດ້ານການພັດທະນາຂອງປະເທດ ໃນປີ 2015

ເປົ້າໝາຍອີກເປົ້າໝາຍໜຶ່ງຂອງກອງປະຊຸມ ກໍ່ແມ່ນການສ້າງວິໄສທັດຮ່ວມກັນ ໃນການພັດທະນາການສຳລັບນຳພາ ໃນ ສປປ ລາວ, ຈຳແນກຂົງເຂດທີ່ເປັນບູລິມະສິດໃຫ້ການພັດທະນາການນຳພາສຳລັບ 5 ປີໃນຕໍ່ໜ້າ


ສຳລັບຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່:

Khamla Keoounkham, Deputy Cabinet of NAPPA, tel. 9779304, kkhamlah@yahoo.com

Ekkasith Pathammavong, Governance for Empowerment advisor of SNV, tel. 021-413290, epathammavong@snvworld.org

Inka Leisma, Communications Specialist, UNDP, tel. 021 267 777, ext. 751, inka.leisma@undp.org

Nisith Keopanya, Director General, DCSM - PM/DG of Civil Service Management PACSA, tel. 021 2710, nisith@pacsa.gov.la